ວິທີການຫຼຸດຜ່ອນຜົນກະທົບຂອງການປ່ຽນແປງສະພາບດິນຟ້າອາກາດ ມີຄືແນວໃດ?

ຜົນກະທົບຂອງການປ່ຽນແປງສະພາບດິນຟ້າອາກາດ ສາມາດຫຼຸດຜ່ອນໄດ້ ໂດຍການປະຕິບັດຕາມມາດຕະການປ້ອງກັນ. ຂະບວນການນີ້ ເອີ້ນວ່າ ການປັບຕົວ ເຂົ້າກັບການປ່ຽນແປງດິນຟ້າອາກາດ. ການປັບຕົວ ຊ່ວຍໃຫ້ເຮົາສາມາດຫຼີກລ່ຽງຜົນກະທົບທີ່ເປັນອັນຕະລາຍ ຈາກການປ່ຽນແປງສະພາບດິນຟ້າອາກາດ ແລະ ຊອກຫາແນວທາງແກ້ໄຂ ເພື່ອປົກປັກຮັກສາ ແລະ ພັດທະນາຊີວິດຂອງເຮົາ ຢູ່ພາຍໃຕ້ສະພາບແວດລ້ອມໃໝ່.

ຂະແໜງກະສິກຳ

- ກັກເກັບນ້ຳຝົນ ສຳລັບໃຊ້ວຽກຊິນລະປະທານ
- ຕິດຕັ້ງລະບົບຊິນລະປະທານ ທີ່ມີປະສິດທິພາບ ເຊັ່ນ ລະບົບຊິນລະປະທານແບບນ້ຳຫຍອດ
- ປູກພັນພືດ ທີ່ມີຄວາມທົນທານຕໍ່ສະພາບອາກາດຮ້ອນ, ແຫ້ງແລ້ງ
- ນຳໃຊ້ລະບົບກະສິກຳແບບປະສົມປະສານ
- ເລືອກເວລາທີ່ເໝາະສົມສຳລັບການເຮັດຊິນລະປະທານ
- ສ້າງອາຄານສີຂຽວ

ລະບົບນິເວດທາງທຳມະຊາດ

- ປົກປັກຮັກສາຄວາມຫຼາກຫຼາຍທາງດ້ານຊີວະພາບ ເຊັ່ນ ລະບົບນິເວດ ທີ່ສາມາດປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ
- ປະຕິບັດມາດຕະການຄວາມປອດໄພ ກ່ຽວກັບ ໄຟ
- ຫ້າມລ້ຽງສັດ ຢູ່ພື້ນທີ່ລະບົບນິເວດປ່າໄມ້
- ຮັບປະກັນຄວາມສົມດຸນດ້ານການນຳໃຊ້ຫຍ້າ ເພື່ອຮັກສາການຟື້ນຟູສະພາບປ່າໄມ້

ສຸຂະພາບຂອງມວນມະນຸດ

- ສ້າງພື້ນທີ່ສີຂຽວເພີ່ມ ຢູ່ໃນເຂດຕົວເມືອງ
- ຕິດຕາມຂໍ້ມູນ ກ່ຽວກັບ ການແຜ່ລະບາດຂອງເຊື້ອໂລກພະຍາດ ແລະ ມາດຕະການປ້ອງກັນ
- ພະຍາຍາມຢູ່ໃນຮົ່ມ ໃນມື້ທີ່ອາກາດຮ້ອນອົບເອົ້າ
- ແຕ່ງກາຍໃຫ້ແໜດເໝາະກັບສະພາບອາກາດ ແລະ ໃຊ້ອຸປະກອນປ້ອງກັນ ເຊັ່ນ ໝວກ, ຄັນຮົ່ມ, ຄີມກັນແດດ
- ດື່ມນ້ຳຢ່າງເປັນປະຈຳ

ການຫຼຸດຜ່ອນຄວາມສ່ຽງໄພພິບັດ

- ບໍ່ຖິ້ມຂີ້ເຫຍື້ອລົງໃສ່ຊ່ອງລະບາຍນ້ຳ ແລະ ແມ່ນ້ຳ
- ສ້າງລະບົບກັນເຈື່ອນ
- ຕິດຕາມພະຍາກອນທາງດ້ານສະພາບອາກາດ
- ປູກ ແລະ ປົກປັກຮັກສາຕົ້ນໄມ້ທີ່ມີທາດເລິກ ຢູ່ຕາມເຂດຊາຍຝັ່ງທະເລ ເຊັ່ນ ປ່າຊາຍເລນ
- ກຳລະນີເກີດໄພນ້ຳຖ້ວມ ຄວນກະກຽມກະເປົ໋າສຸກເສີນ ແລະ ຊອກຮູ້ ກ່ຽວກັບ ສຸນອົບພະຍົບ
- ຕິດຕັ້ງ ແລະ ອະນາໄມລະບົບລະບາຍນ້ຳຢູ່ເຂດຊຸມຊົນ ຢ່າງສະໝ່ຳສະເໝີ

UNDP-GCF "Armenia's National Adaptation Plan" Project contribution to the Climate Box toolkit